


L'auteur du roman lao,Panay raconte : L'amour et l'usure, la vie d'un couple...

*" ອ້າຍພັນ ! ອ້າຍພັນ !"*

*" ທອງພັນ ! ! ຮວ້າຍ ຫູແຕກເຈົ້າບໍ່ໄດ້ຍິນຫວື ຂ້ອຍຮ້ອງ ? "*

*ເຮົາຕື່ນຈາກອາຣົມ ເລື່ອນລອຍງວາກໄປທາງສຽງເອີ້ນດ້ວຍຈິດທີ່ມີໂທສະອ່ອນ ໆ*

ເຮົາບໍ່ໄດ້ຕື່ນຕົກໃຈຍ້ອນສຽງເບັ່ງອຳນາດນັ້ນພໍທີ່ເມັດງາດຳ ແຕ່ເຮົາຕື່ນຍ້ອນຄວາມຂັດເຄືອງໃຈຕາມທັມມະດາທີ່ "ເມັງ" ຊຶ່ງຄວນຈະຫວານ ແຕ່ກັບມາສົ້ມກັບເຮົາ

" ເຈົ້າ ເຫັນຕຳຕາວ່າຂ້ອຍນັ່ງໂທນໂທ້ຢູ່ຫນີ້... ມີຫຽັງກະວ່າມາຊັ້ນຕວ່າ... ຈຳເປັນຕ້ອງຊິມາຮ້ອງໃຊ້ອຳນາດກັບຂ້ອຍຈັ່ງຊີ້ ! "

ເຮົາຄິດ ຕອບໂຕ້ຢູ່ໃນໃຈ ກ່ອນສິ່ງສຽງຕອບເລື້ອຍ ໆ ເປັນ ໆ ອອກໄປວ່າ

" ເອີ ! ໄດ້ຍິນແລ້ວ ປາກເວົ້າປາກວ່າຫຽັງກະເຊີນ ກຳລັງຖ້າຟັງ ! "

" ໄດ້ຍິນເຮັດໃດຈັ່ງວ່ານັ່ງເສີຍມັ່ງຢູ່ ຄືຄົນບໍ່ມີຫົວໃຈແທ້... ກະຍັງວ່າຂ້ອຍປາກຖາມເຈົ້າ ນ້ອງຊິມາແຕ່ເມືອງຝຣັ່ງຕອນບ່າຍ ເຈົ້າຊິບໍ່ໄປຮັບນ້ອງນຳຂ້ອຍເບາະ... ຄັນຊິໄປບໍ່ເຫັນຫ້າງເຄື່ອງ ຫຼືວ່າເຈົ້າບໍ່ສົນໃຈ ບໍ່ດີໃຈທີ່ນ້ອງຂ້ອຍມາ "

ຫົງແກ້ວກັບເຮົາເອົາກັນໄດ້ ສິບປາຍກັບຈັກປີແລ້ວກະບໍ່ຈື່ຄັກ... ເອົາກັນຕັ້ງແຕ່ຫົງເງິນຍັງ ຫາກໍຮຽນຢູ່ວິທະຍາລັຍປີທີສອງ... ສິບປີປາຍກໍນັບວ່າດົນເຕີບ... ດົນຈົນວ່າຫົງເງິນ ໄປຮຽນຢູ່ເມືອງນອກເມືອງນາ ໄດ້ປຣິ ຍາຕຣີ ຊິເອົາມາອວດຢູ່ດຽວນີ້ ມ່ ໆ ນີ້ແລ້ວ... ປານນີ້ຍົນຂຶ້ນ ຈາກບາງກອກແລ້ວ ຍັງກໍບໍ່ຮູ້ ຄືຊິຂຶ້ນແລ້ວລະ ຍັງອີກບໍ່ຮອດຊ ົ່ວໂມງ ກະຮອດວຽງຈັນແລ້ວ ຖ້າວ່າບໍ່ຜິດຈາກເວລາ ໃນຕາຕຣາງການບິນຄືສູ່ເທື່ອ.

" ເອີ ! ໄປກະດີ ແຕ່ກໍບໍ່ຟ້າວເທື່ອຕວ່າ ? ຍັງອີກເກືອບຊົ່ວໂມງ "

ເຮົາຕົກລົງເອີນຫົ່ຫມົກນໍາ ເປັນການຕັດບັນຫາ ພ້ອມກັບເບິ່ງໂມງປູ່ແຂນ ສຽງຂອງທົງແກ້ວກໍຈຶ່ງຄ່ອຍອ່ອນ ໆ ລົງ ແລະ ມີຮອຍຍີ້ມສົມຫວັງບານເຕັມໃບຫນ້າ.

ເຮົາຮູ້ນິສັຍທົງແກ້ວດີ...

*ເຮົາຮູ້ ແລະຮູ້ມາດົນນານແລ້ວວ່າ ທົງແກ້ວມັກຕາມໃຈເຈົ້າຂອງ... ເປັນຄົນເຫັນແກ່ໂຕ... ເຫັນແກ່ໄດ້...*

ນິສັຍແບບນີ້ເຮົາບໍ່ມັກ

ບໍ່ມັກປ່າງແຮງ ແຕ່ກໍເສັງໃຈ... ມັນຫຼ້າມັນສວາຍໄປພໍແຮງແລ້ວ ຍ້ອນວ່າສິ່ງເຫຼົ່ານີ້ ເຮົາຫາກໍມາຮຽນຮູ້ ແລະຮູ້ຄັກແນ່ເມື່ອທົງແກ້ວກໍາລັງຖືພາລູກຜູ້ຖ້ວນສອງ.

ຖ້າຮູ້ມາກ່ອນນີ້ ຄືຊິດີ ແຕ່ເຮົາກໍບໍ່ມີໂອກາດໄດ້ຮູ້...

ເວົ້າເຖິງກ່ອນກິນດອງ ແຮ່ງບໍ່ມີທາງຮູ້ໄດ້ເລີຍ...

ກ່ອນກິນດອງ ກັບດຽວນີ້ ທົງແກ້ວເປັນຄົນລະຄົນ... ຕ່າງກັນປານຟ້າກັບດິນ ... ປານຂາວກັບດໍາ...

*ແຕ່ກ່ອນ*

ສມັຍຍັງເປັນສາວ ເຮົາເຄີຍຄຶດວ່າ ຖ້າໄດ້ເມັຽຄືທົງແກ້ວ ຊີວິດນີ້ ເຮົາຈະບໍ່ຕ້ອງຮ່ອນຣົນຊອກເຊາະສແວງຫາກໍາໄຣພິເສດເຫຼືອເພື່ອຊີວິດຈາກທາງອື່ນ ທາງໃດອີກເລີຍ...

ເຖິງຈະຜົວສິອໍ່າຖໍ່າໄປຫນ້ອຍນຶ່ງ

ແຕ່ວ່າທົງແກ້ວກໍກ້ຽງເກົາ ສົດໃສ ແລະເບີກບານປູ່ທຸກຍາມ...ເຮົາມັກດອກໄມ້ສົດທໍ່ ໆ ກັນກັບທີ່ມັກຜູ່

ຍິງ ຊຶ່ງມີຄວາມເບີກບານວາງປູ່ເທິງໃບຫນ້າທຸກຍາມ...

ຂໍ້ ນີ້ອາດຈະແມ່ນການເຫັນແກ່ໂຕຂອງເຮົາ

*ຖືກ ບໍ່ຖຽງ !*

ແຕ່ວ່າກະມີໃຜແດ່ລະ ທີ່ບໍ່ມັກຄວາມເບີກບານ ?

*ຫຼືຍັງມີໃຜມັກຄົນຕາຍແລ້ວ ?*

ທຸກສິ່ງທຸກຢ່າງກໍຄ່ອຍ ໆ ແປງປີ້ນຜັນປ່ຽນໄປພ້ອມກັບເວລາ... ເວລາຊຶ່ງເຮັດໃຫ້ທິງແກ້ວ
ແຕ່ກ່ອນກັບກາຍມາມີນິສັຍຄືດຽວນີ້ ຈົນເຮົາອ່ອນຈິດອ່ອນໃຈເປັນກະດັກ...

" ເອີນໍເວລາ ! "

*" ໃນເມື່ອປ່ຽນທຸກສິ່ງທຸກຢ່າງ ບໍ່ວ່າຮູບທັມ ຫຼືນາມທັມໄດ້*

*ຈັ່ງຊີ້ ເປັນຫຽັງບໍ່ລອງປ່ຽນໃຫ້ເຮົາມີເມັງທີ່ບໍ່ແມ່ນທິງແກ້ວ ເບິ່ງແດ່... ? "*

ເຮົາເຄີຍຄຶດຕັ້ງຄໍາຖາມແນວນີ້ຫຼາຍເທື່ອ

ຫຼາຍເທື່ອ ແລະ ຫຼາຍເທື່ອ...

ແລ້ວໃນທີ່ສຸດຊຶ່ງຍັງບໍ່ທັນສຸດ ເຮົາກໍມີເມັງທີ່ບໍ່ແມ່ນທິງແກ້ວຕາມເຄີຍຄຶດຢາກລອງໄດ້ນັ້ນແທ້ ໆ

ຂໍຍອມຮັບດ້ວຍໃຈຊື່ວ່າ ຣະຫວ່າງ ໃຫມ່ກັບເກົ່ານັ້ນ ມັນຕ່າງກັນຫຼາຍ... ຕ່າງຈົນຈ່ອງດຶງຈິດໃຈເຮົາ
ໃຫ້ເຫີນຫ່າງອອກ ຈາກທິງແກ້ວໄກໄປເລື້ອຍ ໆ...

ແລະດຽວນີ້...

ຈິດໃຈເຮົາກັບທິງແກ້ວດ້ານຄວາມຮັກ...

ເຖິງຈະຢູ່ກ້ອງຊາຍຄາດຽວກັນ

ກິນເຂົ້າຮ່ວມພາ ແລ້ວນອນຮ່ວມຫ້ອງດຽວກັນ

ກໍຖືໄດ້ວ່າ ຢູ່ຫ່າງໄກກັນຄົນລະຟາກໂລກ

ເຫດຜົນທີ່ພາໃຫ້ສະພາບເປັນແນວນີ້ ກໍເນື່ອງມາຈາກຫົງແກ້ວເອງ

ຫົງແກ້ວເປັນຫົງ...

ເປັນຫົງທີ່ສູງສັກ ແລະບໍຣິບູນດ້ວຍສົມບັດພັສຖານ

ເຮົາເອງກ່ອນນີ້ບໍ່ມີຫຍັງ...

ບໍ່ມີແມ່ນແຕ່ຄວາມຫວັງໃນອະນາຄົດ

ທໍ່ທີ່ເຮົາມືນຕາອ້າປາກຂຶ້ນມາໄດ້ດຽວນີ້ ຊິວ່າ...

ຫົງແກ້ວມີສ່ວນດຶງແກ່ຂຶ້ນມາກໍວ່າແມ່ນ

ຊື່ສຽງອິດທິພົນຂອງພໍ່ເຖົ້າມີຫຼາຍພໍທີ່ຊິ ສະທ້ອນຜົນມາຮອດລູກເຂີຍ ໃຫ້ໄດ້ຂຶ້ນຊັ້ນໄວກວ່າປົກກະຕິທັມດາຢູ່ແດ່...

ແລະອາສັຍອຳນາດຫນ້າທີ່ ຊຶ່ງກ້າວຫນ້າຂຶ້ນໄວລືບ ໆ ນີ້ ເຮົາກໍພໍມີທາງໄດ້ພິເສດ ເຫຼືອເກີນເລີຍຢູ່ບໍ່ຂາດ

ໄດ້ບໍ່ຂາດກໍຈຶ່ງເຫຼືອຈ່າຍພໍເສີມສ້າງຖານະ ໃຫ້ລອຍລິ່ວຂຶ້ນມາຍັງຖ້ານທີ່ສູງກວ່າແຕ່ກ່ອນ

ສູງກວ່າແຕ່ກ່ອນຫຼາຍ ຈົນຂນາດວ່າເຮົາເອງບໍ່ເຄີຍຄຶດຝັນວ່າ ຊິໄດ້ດີມີສຸກເຖິງປານນີ້

ດ້ວຍເວລາເທິງຫມົດ ທີ່ປ່ຽນແປງເຮົາຈາກສະພາບ " ຫມາບໍ່ມີປອກຄໍ " ຈົນກາຍມາເປັນ " ຫມາຕົກຖານ " ...

ຫົງແກ້ວ ກໍປ່ຽນແປງໄປນຳ ຈົນເປັນຄົນລະຄົນ ແລະຄວາມປ່ຽນແປງຂອງຫົງແກ້ວເທິງຫມົດນີ້

ລ້ວນແລ້ວແຕ່ແມ່ນສິ່ງທີ່ເຮົາກິນບໍ່ໄດ້ ຫຼືກິນໄດ້ ກໍກິນຢູ່ຢ່າງແສນທໍຣະມານ ທໍຣະກັມ

ຫຼາຍເທື່ອ ທີ່ເຮົາພະຍາຍາມປຽບທຽບ

ຣະຫວ່າງ *ຫົງແກ້ວ ທີ່ເປັນ " ເມັງ "...*

ແລະ *" ເມັງ " ທີ່ບໍ່ແມ່ນຫົງແກ້ວ*

ຜົນກໍຄືວ່າ ນ້ຳຫນັກຂອງຄວາມຮັກສເນ່ຫາຊຶ່ງປົກຕິກໍສິຫຍ້ອນ ໆ ໄປຫາທາງໃຫມ່ຢູ່ແດ່ແລ້ວແຮງ ຕື່ມຫນັກລົງໄປອີກ.

ກະເປັນຫຽັງຊິບໍ່ເປັນຈັ່ງຊັ້ນ ?

ໃນເມື່ອວ່າ ຂນະທີ່ຝ່າຍນຶ່ງ ກຳລັງຫຼົງໄຫຼເມົາໃຈວ່າຕົນເປັນຫົງ... ອວດຍິ່ງຈອງຫອງ
ແລະຫມິ່ນຫຽາມຂ້າມຜົວປານວ່າ ຜົວມີຫນ້າທີ່ຢູ່ພຽງຢ່າງດຽວ ຄືເປັນ...

*" ຜົວ "*

ແລ້ວອີກຢ່າງນຶ່ງ ນອບນ້ອມຖ່ອມຕົນ... ໃຫ້ກຽດເທີດທູນພໍປານ *ຜົວ* ເປັນ *ຫມົດທຸກສິ່ງ ທຸກຢ່າງໃນຊີວິດ.*

ລາງເທື່ອ...

ພໍຮອດຍາມຫາພາເຂົ້າແລງ ຫົງແກ້ວ ມັກຊິບອກວ່າ

" ອ້າຍພັນ ບໍ່ຕ້ອງໃຫ້ເດັກນ້ອຍເຂົາແຕ່ງຄວາມກິນ ເທິງໂຕະແຫລະນໍ ຂ້ອຍຢາກໄປກິນ ໄກ່ຢ້າງໄຟແດງ ນ່ະ !!!!"

ຫຼືບໍ່ກະ...

" ອ້າຍພັນຈື່ບໍ່ວ່າ ອາທິດນີ້ເທິງອາທິດເຈົ້າຍັງບໍ່ທັນໄດ້ພາຂ້ອຍໄປເບິ່ງຊີເນຈັກເທື່ອ"

ຄັນຊັ້ນກະ...

" ພາຂ້ອຍໄປເບິ່ງຊີເນເຣື່ອງນີ້ແດ່ ເຣື່ອງນີ້ *ມິດຊັຍ ບັນຊາ* ສະແດງເປັນເຣື່ອງ *ສຸດທ້າຍ*

ເຣົາຈື່ໄດ້ວ່າເຣື່ອງສຸດທ້າຍຂອງມິດຊັຍ ບັນຊາ ທີ່ເຣົາເຄີຍພາຫົງແກ້ວໄປເບິ່ງນີ້ ຄືຊີຮອດສິບເຣື່ອງແລ້ວບໍ່ຈັກ....

ກໍຣະນີ ຫມູ່ນີ້ຊິບໍເກີດມີຂຶ້ນໃຫ້ເຣົາຫມຸດຫມັດຈິດໃຈເລີຍ ຖ້າຫາກວ່າມື້ໃດເຣົາໄປນອນເຮືອນພຸ້ນ...

ເຮືອນ *ແພງ* ຫັ້ນກໍ...

ຟັງແຕ່ຊື່ກໍຊື່ນຂຶ້ນມາພໍແຮງ...

ແພງບໍ່ຄືກັບຫົງແກ້ວ ໃນຂໍ້ ໃດ ໆ ເລີຍ

ຢູ່ເຮືອນຂອງແພງ ຊຶ່ງກໍແມ່ນເຣົານີ້ລະຊອກເງິນປຸກໃຫ້ຢູ່

*ທຸກຢ່າງແມ່ນເຣົາເປັນໃຫຍ່*

ຖ້າວ່າເສົາໃດ ເຣົາໄປຮອດແລງແດ່ ແພງກໍຈະຖາມວ່າ

" ຕ໋າຍ ! ຍ...້າຍ ຄືວ່າມາຄ່ຳແທ້ ແພງເກືອບວ່າຊິບໍ່ແຕ່ງຄວາມກິນຖ້າແລ້ວລະ ກິນເຂົ້າບໍ່ມີ ຍ...້າຍ ນັ່ງນຳ ແພງບໍ່ຢາກ "

ຄວາມເວົ້າແນວນີ້ຖ້າແມ່ນຫົງແກ້ວ ກໍຕ້ອງວ່າ

*" ຄືບໍ່ແຈ້ງຄ່ອຍມາ ? "*

ກັບແພງນັ້ນຖ້າເຣົາຖາມວ່າ

" ທິດໜ້າອ້າຍຊິໄປຮ່ອງກົງ ແພງຢາກໄດ້ຫຍັງບໍ່ ? "

ແພງກໍຈະເວົ້າສຽງມ່ອນ ໆ ຫວານ ໆ ຈັບໃຈວ່າ

" ແພງບໍ່ກ້າສັ່ງ ຍ...້າຍ ດອກ ແຕ່ທີ່ນີ້ ຍ...້າຍກະໜົດນຳແພງຫຼາຍພໍແຮງແລ້ວ ຈັກໜ່ອຍໄທເຮືອນໃຫຍ່ເພິ່ນຊິວ່າ ຍ...້າຍຂົນມາຖູນຮັ່ງໃຫ້ແຕ່ແພງ ເພິ່ນຊິຮ້າຍ ຍ...້າຍ "

ຄຶດເບິ່ງດູ໊ ເຂົາເດັກນ້ອຍກວ່າຕັ້ງຈັກປີ ເຂົາຍັງຮູ້ຈັກເກງອົກເກງໃຈ... ບາດຫົວໂຕ ຜ່ານໂລກມາຈົນພໍແຮງ ຄັນແມ່ນເຮົາໄປເມືອງນອກເມືອງນາ ຄືນມາບໍ່ມີຂອງຕ້ອນ ແນວໃດກໍຕ້ອງແອ້ດ ໆ ໃສ່ໂລດວ່າ

" ໄປເຫິງເທື່ອ ແຫວນເພັດຈັກວົງ ດ້າມສອງສາມຮ້ອຍໂດລາ ຮອດບໍ່ຊື້ຕຶດໄມ້ຕຶດມື້ມາໃຫ້ ຫຼືວ່າເອົາໄປຖິ້ມອີ່ໃດຢູ່ທາງພຸ້ນຊໍ້າບຸ໋ "

ແນວວ່າຄົນຕ່າງກັນ ມັນຈັ່ງຕ່າງກັນ

ຄຶດໄປຄຶດມາ ຫຼືຊິບໍ່ໄປຮັບ ທົງເງິນມັນຊໍ້າບໍ່ ?...

ບ໊ະ ! ອິດສາໄປເທາະເປີ ຂີ້ຄ້ານຟັງແມ່ຍິງເຊື້ອຊາດສກຸນຫົງ ຈົ່ມໃສ່ຫູ ບໍ່ໄປຄືຊິບໍ່ແລ້ວດອກ ເພິ່ນຈຸ້ມໃຫຍ່ ເຈື້ອໃຫຍ່

ໃຈນຶ່ງ ຊໍ້າຄຶດຫ່ວງແພງ

ເຫັນວ່າຄອງມື້ອອກຢູ່ ຫຼືຊິອອກມື້ນີ້ມື້ອື່ນບໍ່ຈັກ ບໍ່ໄດ້ໄປຈອບເບິ່ງສາມມື້ນີ້ແລ້ວ.

" ອ້າວ ຣ ! ອ້າຍພັນ ໃສວ່າຊິໄປຄືເສີຍຢູ່ ? "

ຄຶດໄດ້ທໍ່ນັ້ນສຽງ ນາງພະຍາຫົງແກ້ວ ກໍດັງຝົດສນັ່ນຂຶ້ນຄັບທິບ ແລະຍັງບໍ່ທັນທີ່ເຮົາຊິນຸ່ງເຄື່ອງ ສຽງຫົງແກ້ວກໍຫລຸຫຼັ່ງເປັນນ້ຳໄຫຼໄຟໄຫມ້ມາອີກວ່າ

*" ຄືຊິບໍ່ຢາກໄປດອກນໍ້ ມື້ນີ້ ເພິ່ນຄາເມັງກັບລູກ "*

" ແມ່ນຫຍັງເກາະຫົງ ? "

ເຮົາຖາມອອກໄປດ້ວຍຄວາມຄິດສັບສົນຈົນຄວບຄຸມໄວ້ບໍ່ຢູ່

" ກະຊິແມ່ນຫຍັງອີກ ຄັນບໍ່ແມ່ນອີ່ແພງຕາ ຍອດຂມອງອີ່ມເຈົ້າ ມັນເກີດມານຫົວຂົນຂຶ້ນມາປະຈານເຈົ້າ ໃຫ້ໂລກໄດ້ຮູ້ແລ້ວວ່າ ເຈົ້າລັກນອກຫມົກນອກໃຈຂ້ອຍມາແຕ່ເຫິງ !!!! "

*" ຫົງ ! ເຈົ້າໄປຮູ້ມາແຕ່ໃສ ? "*

" ຊິໄປຮູ້ມາແຕ່ໃສ ນີ້ເນ ຈົດຫມາຍບັນຍາຍຮັກ "

ຫົງປ້ອມເຈັ້ງຂາວແຜ່ນນ້ອຍ ດຶກມາເກືອບຖືກຫນ້າເຮົາ... ຕອນນັ້ນ ຈັກວ່າສີຫນ້າທ່າທາງເຮົາເປັນຈັ່ງໃດ ບອກບໍ່ຖືກ ຟ້າວລຸກລີ້ລຸກລົນ ຄຸບເຈັ້ງຍໍ່ ໆ ນັ້ນ ຂຶ້ນມາພິອອກອ່ານ

*" ຍ...້າຍ ພັນສຸດບູຊາ....*

*ແພງກັມລູກແລ້ວ ແຕ່ບ່າຍມື້ວານນີ້ ຄອງ ຍ...້າຍ ກໍບໍ່ເຫັນຈັກເທື່ອ... ຢາກໃຫ້ມາເຫັນຫນ້າລູກຊາຍ ວ່າຄືພໍ່ຫຼາຍປານໃດ... ດຽວນີ້ຍັງ ຢູ່ ໂຮງຫມໍ... "*

*ແພງ ຂອງ ຍ...້າຍ.*

ອ່ານສຸດ ກໍມີສຽງປືນດັງ *"ປ້າງ ໆ "*ຂຶ້ນຊ້ອນກັນສອງບາດ ເຮົາຫຼຽວວັບໄປທາງສຽງນັ້ນກ່ອນຄວາມຄິດ.

ເຫັນຫົງແກ້ວຢືນຢູ່ໄກບໍ່ພໍວາ ຫນ້າເຄັ່ງຄຽດບູດບຶ້ງເປັນຍັກເປັນມານ ມືທັງສອງກໍາດ້າມປືນແຫນ້ນຈົນສັ່ນເຊັນ... ຮູ້ສຶກສຽວປາບເຂົ້າໃນຫົວໃຈ ແລະແລ້ວ ຮູບຫນ້າຂອງຫົງແກ້ວ ກໍລືບຈາງຫ່າງໄປ ເຫຼືອແຕ່ເງົາມົວ ໆ ແລ້ວກໍມືດມິດ...

ໂອ່... ລູກຂອງແພງເປັນຜູ່ຊາຍ...

*ເປັນຜູ່ຊາຍຄືພໍ່...*

ຄວາມຄຶດໃນວິນາທີສຸດທ້າຍ ແວ໊ບເຂົ້າມາໃນສມອງຂອງເຮົາວ່າ

*" ຂໍ... ຂໍຢ່າໃຫ້ລູກຕ້ອງມີຕອນປາຍຊີວິດຄືພໍ່ເລີຍ !! "*

ແລະແລ້ວ

*ກ່ອນທຸກສິ່ງທຸກຢ່າງຈະຢຸດສະບັ້ນລົງປານວ່າໂລກເທິງໂລກເຊົາ ຫມູນ... ປານວ່າສະພາບແລະສັພສິ່ງທັງປວງໃນໂລກນີ້ສລາຍໄປໃນອະຍັມ ທັນຕາ....*

ເຮົາກໍຮ້ອງດ້ວຍສຽງແຫບແຫ້ງວາບຫວິວ ອອກມາໄດ້ຄຳດຽວວ່າ

" ຫົງ ! "